**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງສະຫວັນນະເຂດ

ເລກທີ ..709... /ຈຂ

ສະຫວັນນະເຂດ, ວັນທີ .09 ເມສາ 2025

# ຂໍ້ຕົກລົງ
# ວ່າດ້ວຍການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 16/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ດຳລັດ ນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025 ສະບັບເລກທີ 183/ນຍ, ລົງວັນທີ 16 ມິຖຸນາ 2022, ດຳລັດ ຂອງລັດຖະບານ ວ່າດ້ວຍກອງທຶນສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 05/ລບ ລົງວັນທີ 12 ມັງກອນ 2023 ແລະ ດຳລັດ ຂອງລັດຖະບານ ວ່າດ້ວຍການກຳນົດຂະໜາດ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 04/ລບ ລົງວັນທີ 12 ມັງກອນ 2023;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງ ກ່ຽວກັບການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ) ສະບັບເລກທີ 35/ສພຂ.ສຂ, ລົງວັນທີ 27 ທັນວາ 2024.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງແຂວງ, ເພື່ອພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ຫົວໜ່ວຍ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ຊຸກຍູ້ການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ແນໃສ່ສ້າງວຽກເຮັດງານທຳ, ສ້າງລາຍຮັບ, ປົກປ້ອງພູມປັນຍາທ້ອງຖິ່ນ, ຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ໃຫ້ມີການພັດທະນາຢ່າງທົ່ວເຖິງ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ເຕີບໃຫຍ່ເຂັ້ມແຂງ.

**ມາດຕາ 2 (ປັບປຸງ) ການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນຫົວໜ່ວຍທຸລະກິດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍກຳນົດຂະໜາດຕາມຈຳນວນ ແຮງງານສະເລ່ຍໃນປີ, ມູນຄ່າຊັບສິນທັງໝົດ ແລະ ລວມຍອດລາຍຮັບທຸລະກິດ ປະຈຳປີຂອງແຕ່ລະຂະແໜງວິສາຫະກິດ ຊຶ່ງລັດຖະບານເປັນຜູ້ກຳນົດໃນແຕ່ລະໄລຍະ;

ການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນການສ້າງກາລະໂອກາດ, ສ້າງເງື່ອນໄຂທີ່ເອື້ອອຳນວຍ, ໃຫ້ແກ່ປະຊາຊົນຮູ້ດຳເນີນທຸລະກິດ, ການຜະລິດເປັນສິນຄ້າ, ຮູ້ເຮັດການຄ້າ ແລະ ບໍລິການ, ຮູ້ນຳໃຊ້ເຕັກນິກວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ຮູ້ຂໍ້ມູນຂ່າວສານການຕະຫຼາດ, ການເຂົ້າຫາແຫຼ່ງທຶນ, ການຜະລິດເປັນກຸ່ມ, ເປັນສະມາຄົມ ຫຼື ເປັນສະຫະກອນປຸງແຕ່ງເປັນສິນຄ້າ ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ ສາມາດແຂ່ງຂັນໄດ້ ທັງພາຍໃນ ແລະ ຕ່າງປະເທດ.

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຽນຫຍໍ້ວ່າ **ຈນກ** .

**ມາດຕາ 3 (ປັບປຸງ) ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຈນກ** ໝາຍເຖິງ ຫົວໜ່ວຍດຳເນີນທຸລະກິດ ທີ່ໄດ້ຂຶ້ນທະບຽນຕາມຂະໜາດຂອງທຶນ, ຈຳນວນຄົນ ແລະ ລາຍຮັບທຸລະກິດປະຈຳປີ ເປັນສິ່ງວັດແທກ ໂດຍໃຫ້ສອດຄ່ອງຕາມດຳລັດ ສະບັບເລກທີ 04/ລບ, ລົງວັນທີ 12 ມັງກອນ 2023;

2. **ຜະລິດຕະພາບ** ໝາຍເຖິງ ປະສິດທິພາບ ແລະ ປະສິດຜົນ ຂອງການເຄື່ອນໄຫວດຳເນີນທຸລະກິດ, ການຜະລິດໂດຍເປັນການປຽບທຽບລະຫວ່າງຜົນໄດ້ຮັບ ແລະ ປັດໄຈລົງທຶນໃສ່ທຸລະກິດ ເຊັ່ນ: ແຮງງານ, ທຶນ, ວັດຖຸດິບ ແລະ ເວລາ;

3. **ນະວັດຕະກຳ** ໝາຍເຖິງ ການປະດິດສ້າງ, ການພັດທະນາ ແລະ ການນຳສະເໜີຜະລິດຕະພັນ, ຂະບວນການ ຫຼື ການບໍລິການແບບໃໝ່ ທີ່ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມສາມາດໃນການແຂ່ງຂັນ;

4. **ສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ** ໝາຍເຖິງ ຜະລິດຕະພັນທີ່ນຳໃຊ້ສີມືແຮງງານ, ພູມປັນຍາ, ຫົວຄິດປະດິດສ້າງຂອງຄົນໃນທ້ອງຖິ່ນ, ແມ່ນສິນຄ້າທີ່ເປັນບຸລິມະສິດ ແລະ ໂດດເດັ່ນຂອງເມືອງ ທີ່ຮັບປະກັນທາງດ້ານປະລິມານ, ຄຸນນະພາບ ແລະ ຊື່ສຽງ ຂຽນຫຍໍ້ດ້ວຍພາສາອັງກິດ **“ODOP”** ຫຼື **One District One Product;**

5. **ການພັດທະນາຕາມທິດສີຂຽວ** ໝາຍເຖິງການພັດທະນາການຜະລິດ, ການປຸງແຕ່ງແບບເປັນມິດກັບທຳມະຊາດ, ປູກພືດທົດແທນ, ເປັນມິດກັບສິ່ງແວດລ້ອມ, ບໍ່ໃຊ້ສານເຄມີທີ່ເປັນພິດຮ້າຍແຮງຕໍ່ລະບົບນິເວດ, ສັດ ແລະ ມະນຸດ;

6. **ເສດຖະກິດຄອບຄົວ ໃນດ້ານການຜະລິດກະສິກຳ ແລະ ຫັດຖະກຳ** ໝາຍເຖິງ ການຜະລິດທີ່ໃຊ້ແຮງງານຂອງສະມາຊິກພາຍໃນຄອບຄົວຕົນເອງ ໂດຍບໍ່ໄດ້ຈ້າງແຮງງານບຸກຄົນພາຍນອກແມ່ນນຳໃຊ້ບຸກຄົນທີ່ມີຊື່ໃນສຳມະໂນຄົວດຽວກັນ ຫຼື ທີ່ອາໄສຢູ່ໃນຄອບຄົວດຽວກັນ ເປັນເວລາ 5 ປີ ຕິດຕໍ່ກັນ (ໃນກໍລະນີບໍ່ມີຊື່ໃນປຶ້ມສຳມະໂນຄົວ);

7. **ທຸລະກິດຕາມລະດູການ** ໝາຍເຖິງ ຜູ້ຄ້າຂາຍ ຜະລິດຕະພັນໃດໜຶ່ງ ຕາມລະດູການເປັນຄັ້ງຄາວ ບໍ່ເປັນອາຊີບສະເພາະ;

8. **ຕະຫຼາດນັດ** ໝາຍເຖິງ ຮ້ານຄ້າຂາຍເຄື່ອງຍ່ອຍ, ເຄື່ອງອຸປະໂພກ-ບໍລິໂພກ ທີ່ບໍ່ມີທີ່ຕັ້ງເປັນຫຼັກແຫຼ່ງແນ່ນອນ ເຄື່ອນຍ້າຍຂາຍຕາມການນັດໝາຍທີ່ຈະຈັດຂຶ້ນໃນເທສະບານເມືອງ, ນະຄອນ, ເຂດຊຸມຊົນ ຫຼື ເທສະການໃດໜຶ່ງ ເຊິ່ງມີກຳນົດເວລາທີ່ແນ່ນອນ ຕາມການອະນຸຍາດຂອງເຈົ້າໜ້າທີ່ ແລະ ຂະແໜງການທີ່ກ່ຽວຂ້ອງ;

9. **ການຄ້າບໍລິການເຖິງທີ່** ໝາຍເຖິງ ບຸກຄົນທີ່ນຳເອົາສິນຄ້າໄປເລາະຂາຍ ຕາມບ້ານ, ເຮືອນ ຫຼື ຕາມສະຖານທີ່ສາທາລະນະ ທີ່ບໍ່ມີຫຼັກແຫຼ່ງແນ່ນອນ;

10. **ຮ້ານຂາຍສິນຄ້າເຄື່ອນທີ່** ໝາຍເຖິງ ບຸກຄົນທີ່ດຳເນີນການຄ້າ-ຂາຍ ສິນຄ້າປະເພດຕ່າງໆ ບໍ່ມີສະຖານທີ່ຕັ້ງແນ່ນອນ, ເຄື່ອນຍ້າຍໄປມາໄດ້ ຕາມສະຖານທີ່ໃດໜຶ່ງ ໂດຍບໍ່ມີກຳນົດເວລາໃດໜຶ່ງທີ່ແນ່ນອນ;

11. **ຮ້ານສະດວກຊື້ (Mini Market)** ໝາຍເຖິງ ຮ້ານຄ້າໃດໜຶ່ງ ທີ່ມີສິນຄ້າຫຼາກຫຼາຍຊະນິດ ໄວ້ຈຳໜ່າຍໃຫ້ຜູ້ຊົມໃຊ້ ຜູ້ບໍລິໂພກທົ່ວໄປ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງແຂວງກ່ຽວກັບວຽກງານສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ອົງການປົກຄອງແຂວງ ຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ສ້າງເງື່ອນໄຂອຳນວຍຄວາມສະດວກໃນການດຳເນີນທຸລະກິດຂອງ ຈນກ ໃຫ້ມີປະສິດທິພາບ, ປະສິດທິຜົນ ເພື່ອພັດທະນາ ຈນກ ໃຫ້ຫຼາກຫຼາຍ, ເຂັ້ມແຂງ, ທົ່ວເຖິງ ຕາມທິດສີຂຽວ ແລະ ຍືນຍົງ;

ອົງການປົກຄອງແຂວງ ປົກປ້ອງສິດ ແລະ ຮັບປະກັນສິດຜົນປະໂຫຍດຂອງຜູ້ໄດ້ຮັບອະນຸຍາດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມ ໃຫ້ມີການແລກປ່ຽນບົດຮຽນດ້ານເຕັກນິກ, ວິຊາການທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງເງື່ອນໄຂໃຫ້ທີ່ວໜ່ວຍ ຈນກ ເຂົ້າເຖິງແຫຼ່ງທຶນ.

### ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວ

ວຽກງານສົ່ງເສີມ ຈນກ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ສູນກາງໄດ້ວາງອອກໃນແຕ່ລະໄລຍະ;
2. ເປັນເຈົ້າຕົນເອງໃນການສ້າງແຜນທຸລະກິດ, ແຜນການເງິນ ແລະ ການບັນຊີ;
3. ເປັນວິສາຫະກິດທີ່ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ບໍ່ເປັນໜີ້ທີ່ບໍ່ເກີດດອກອອກຜົນຢູ່ນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ;
4. ຮັບປະກັນໄດ້ສິດຜົນປະໂຫຍດທາງດ້ານເສດຖະກິດ ຂອງການດຳເນີນທຸລະກິດ ໂດຍບໍ່ໃຫ້ມີຜົນກະທົບທາງລົບຕໍ່ສັງຄົມ, ສິ່ງແວດລ້ອມ ແລະ ທຳມະຊາດ ຫັນເປັນເຄິ່ງທັນສະໄໝ ຫຼື ທັນສະໄໝ ໄປສູ່ການຫັນເປັນອຸດສາຫະກຳທັນສະໄໝ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນສູງສຸດ;
5. ຮັບປະກັນ ຄວາມສະເໝີພາບ, ຄວາມໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

### ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ຈນກ ພາຍໃນແຂວງສະຫວັນນະເຂດ.

## ໝວດທີ 2
## ການກຳນົດຂະໜາດ ແລະ ຂົງເຂດ
## ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

### ມາດຕາ 7 (ປັບປຸງ) ການກຳນົດຂະໜາດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ການກຳນົດຂະໜາດ ຈນກ ແມ່ນການຈັດແບ່ງວິສາຫະກິດ ໂດຍອີງໃສ່ເງື່ອນໄຂດ້ານ ຈຳນວນແຮງງານສະເລ່ຍໃນປີ ຫຼື ມູນຄ່າຊັບສິນທັງໝົດ ຫຼື ລວມຍອດ ລາຍຮັບທຸລະກິດປະຈຳປີຂອງວິສາຫະກິດ ທີ່ດຳເນີນກິດຈະການໃນຂະແໜງການຜະລິດສິນຄ້າ, ຂະແໜງການຄ້າ ແລະ ຂະແໜງການບໍລິການ;

ໃນກໍລະນີທີ່ວິສາຫະກິດໜຶ່ງ ມີເງື່ອນໄຂກຳນົດເປັນຫຼາຍຂະໜາດ ໃຫ້ຖືເອົາລວມຍອດລາຍຮັບທຸລະກິດປະຈຳປີ ເປັນເງື່ອນໄຂຕັດສິນ.

1. ຈຸນລະວິສາຫະກິດແມ່ນ ວິສາຫະກິດທີ່ມີເງື່ອນໄຂ ດັ່ງນີ້:

| ຂະແໜງການວິສາຫະກິດ | ຈຳນວນແຮງງານ ສະເລຍໃນປີ (ຄົນ) | ມູນຄ່າຊັບສິນທັງໝົດ (ກີບ) | ລວມຍອດລາຍຮັບທຸລະກິດປະຈຳປີ (ກີບ) |
|---|---|---|---|
| ການຜະລິດ | 1-5 | ບໍ່ເກີນ 120,000,000 | ບໍ່ເກີນ 400,000,000 |
| ການຄ້າ | 1-5 | ບໍ່ເກີນ 180,000,000 | ບໍ່ເກີນ 400,000,000 |
| ການບໍລິການ | 1-5 | ບໍ່ເກີນ 240,000,000 | ບໍ່ເກີນ 400,000,000 |

2. ວິສາຫະກິດຂະໜາດນ້ອຍ ແມ່ນວິສາຫະກິດທີ່ມີເງື່ອນໄຂ ດັ່ງນີ້:

| ຂະແໜງການວິສາຫະກິດ | ຈຳນວນແຮງງານ ສະເລຍໃນປີ (ຄົນ) | ມູນຄ່າຊັບສິນທັງໝົດ (ກີບ) | ລວມຍອດລາຍຮັບທຸລະກິດປະຈຳປີ (ກີບ) |
|---|---|---|---|
| ການຜະລິດ | 6-50 | ບໍ່ເກີນ 1,200,000,000 | ບໍ່ເກີນ 3,000,000,000 |
| ການຄ້າ | 6-50 | ບໍ່ເກີນ 1,200,000,000 | ບໍ່ເກີນ 4,500,000,000 |
| ການບໍລິການ | 6-50 | ບໍ່ເກີນ 1,800,000,000 | ບໍ່ເກີນ 2,250,000,000 |

3. ວິສາຫະກິດຂະໜາດກາງ ແມ່ນວິສາຫະກິດທີ່ມີເງື່ອນໄຂ ດັ່ງນີ້:

| ຂະແໜງການວິສາຫະກິດ | ຈຳນວນແຮງງານ ສະເລຍໃນປີ (ຄົນ) | ມູນຄ່າຊັບສິນທັງໝົດ (ກີບ) | ລວມຍອດລາຍຮັບທຸລະກິດປະຈຳປີ (ກີບ) |
|---|---|---|---|
| ການຜະລິດ | 51-99 | ບໍ່ເກີນ 4,800,000,000 | ບໍ່ເກີນ 6,000,000,000 |
| ການຄ້າ | 51-99 | ບໍ່ເກີນ 4,800,000,000 | ບໍ່ເກີນ 9,000,000,000 |
| ການບໍລິການ | 51-99 | ບໍ່ເກີນ 7,200,000,000 | ບໍ່ເກີນ 6,000,000,000 |

**ມາດຕາ 8 (ປັບປຸງ) ຂົງເຂດທຸລະກິດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈນກ ແບ່ງເປັນ ສາມ ຂົງເຂດ ດັ່ງນີ້:**

1. ຂົງເຂດດຳເນີນການຜະລິດ:

\+ ການຜະລິດກະສິກຳ: ການປູກພືດອຸດສາຫະກຳ, ການປູກໄມ້ອຸດສາຫະກຳ, ໄມ້ດອກ, ໄມ້ປະດັບ ການປູກໄມ້ໃຫ້ໝາກ, ປູກພືດ-ຜັກ, ການລ້ຽງສັດນ້ຳ-ສັດບົກທຸກປະເພດ ແລະ ອື່ນໆ;

\+ ການຜະລິດອຸດສາຫະກຳປຸງແຕ່ງ: ການຜະລິດປຸງແຕ່ງຜະລິດຕະພັນຈາກຜົນຜະລິດກະສິກຳ, ຈາກຊັບພະຍາກອນທຳມະຊາດ, ການຜະລິດຫັດຖະກຳປຸງແຕ່ງ; ຈະນຳໃຊ້ວັດຖຸດິບຈາກພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດກໍ່ໄດ້;

2. ຂົງເຂດດຳເນີນການຄ້າ: ຕະຫຼາດປະເພດຕ່າງໆ, ຮ້ານຊຸບພະສິນຄ້າ, ຮ້ານຂາຍຍົກ-ຂາຍຍ່ອຍ, ການ ນຳເຂົ້າ-ສົ່ງອອກສິນຄ້າ, ການຊື້-ຂາຍສິນຄ້າທາງເອເລັກໂຕຼນິກ ແລະ ອື່ນໆ;

3. ຂົງເຂດດຳເນີນການບໍລິການ: ການຈໍລະຈອນແຈກຢາຍສິນຄ້າ, ການຂົນສົ່ງ, ການທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ, ສະຖານທີ່ບັນເທີງ, ການສ້ອມແປງ, ການສຶກສາພາກເອກະຊົນ, ການຮັບຝາກລົດ, ລະບົບສາງສິນຄ້າ-ຄ່ຽນຖ່າຍສິນຄ້າ, ການບໍລິການທາງການແພດ ແລະ ການບໍລິການອື່ນໆ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ການຄຸ້ມຄອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

### ມາດຕາ 9 (ປັບປຸງ) ການຄຸ້ມຄອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ການຄຸ້ມຄອງ ຈນກ ແມ່ນການແບ່ງຂັ້ນຄຸ້ມຄອງ, ກຳນົດພາລະບົດບາດຂອງຂະແໜງການລັດ, ທັງເປັນການອຳນວຍຄວາມສະດວກໃຫ້ຫົວໜ່ວຍ ຈນກ ສາມາດຂຶ້ນທະບຽນວິທະສາຫະກິດໃນການເຄື່ອນໄຫວທຸລະກິດຖືກຕ້ອງຕາມກົດໝາຍລະບຽບການ.

### ມາດຕາ 10 (ປັບປຸງ) ຂັ້ນຕອນ ຂໍອະນຸຍາດແຈ້ງຂຶ້ນທະບຽນ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ການແຈ້ງຂຶ້ນທະບຽນວິສາຫະກິດ, ການເກັບກຳຂໍ້ມູນສະຖິຕິ, ການຕິດຕາມ ການດຳເນີນກິດຈະການເປັນປະຈຳ, ກວດກາ ການເສຍພັນທະອາກອນ ຫຼື ພັນທະອື່ນໆ ຕາມກົດໝາຍກຳນົດໄວ້, ປະເມີນຜົນໄດ້ຮັບປະຈຳປີ ຂອງທຸລະກິດ ແລະ ສັງລວມ ເພື່ອລາຍງານຂັ້ນເທິງຖັດຕົນ;

ບຸກຄົນ ຫຼື ນິຕິບຸກຄົນ ມີຈຸດປະສົງ ແຈ້ງຂຶ້ນທະບຽນ ວິສາຫະກິດ ແມ່ນໃຫ້ນຳເອົາ ສຳມະໂນຄົວ ຫຼື ບັດປະຈຳຕົວ (ສະບັບສຳເນົາ) ໄປປະກອບເອກະສານ ແຈ້ງຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນທີ່ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ນະຄອນ ຫຼື ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຈາກນັ້ນ ແຈ້ງຕໍ່ຂະແໜງການທີ່ກ່ຽວຂ້ອງ ຊຶ່ງເອກະສານປະກອບແຈ້ງຂຶ້ນທະບຽນ ຕາມກົດໝາຍວ່າດ້ວຍ ມີດັ່ງນີ້:

(1) ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ ຕາມແບບພິມ;

(2) ສຳເນົາ ປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ ຫຼື ສຳເນົາ ໜັງສືຜ່ານແດນ ທີ່ຍັງມີອາຍຸການນຳໃຊ້;

(3) ນອກຈາກເອກະສານທີ່ໄດ້ກຳນົດໄວ້ຂ້າງເທິງ ໃຫ້ປະກອບເອກະສານເພີ່ມເຕີມ ຕາມແຕ່ລະກໍລະນີ ດັ່ງນີ້:

- ຜູ້ຈັດການ ຫຼື ເຈົ້າຂອງວິສາຫະກິດ ບໍ່ໄດ້ມາດ້ວຍຕົນເອງ ຕ້ອງມີໃບມອບສັນທະ ຫຼື ໃບມອບສິດພ້ອມດ້ວຍສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ສຳເນົາໜັງສືຜ່ານແດນ ທີ່ຍັງມີອາຍຸການນຳໃຊ້ ຂອງຜູ້ທີ່ຖືກມອບໝາຍໃຫ້ພົວພັນ ກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດ;
- ຈ້າງບຸກຄົນພາຍນອກເປັນຜູ້ຈັດການ ຕ້ອງມີສັນຍາຈ້າງຜູ້ຈັດການ ຫຼື ໜັງສືແຕ່ງຕັ້ງຜູ້ຈັດການ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ຈຳເປັນຂຶ້ນທະບຽນວິສາຫະກິດ ເຊັ່ນ: ຫົວໜ່ວຍການຜະລິດກະສິກຳ ແລະ ຫັດຖະກຳ, ການຄ້າບໍລິການເຖິງທີ່, ຮ້ານຂາຍສິນຄ້າເຄື່ອນທີ່ ແລະ ຜູ້ຂາຍສິນຄ້າຕາມລະດູການ ເຊິ່ງມີລາຍຮັບປົກກະຕິບໍ່ເກີນ ໜຶ່ງແສນກີບຕໍ່ໜຶ່ງວັນ, ແຕ່ຕ້ອງໄດ້ລາຍງານ ຫຼື ແຈ້ງຂຶ້ນບັນຊີກິດຈະການນຳອຳນາດການປົກຄອງບ້ານຂອງຕົນຂຶ້ນກັບ ເພື່ອໃຫ້ສາມາດຕິດຕາມ ສະໜັບສະໜູນ ແລະ ຊ່ວຍເຫຼືອ, ປະກອບສ່ວນພັດທະນາຕາມຂັ້ນຄຸ້ມຄອງ ແລະ ລະບຽບການ.

### ມາດຕາ 11 (ປັບປຸງ) ຂັ້ນຄຸ້ມຄອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ອົງການປົກຄອງບ້ານ, ຕາແສງ ເກັບກຳສະຖິຕິ, ກວດກາການ ເຄື່ອນໄຫວ, ຈຳນວນຜູ້ດຳເນີນທຸລະກິດກ່ຽວກັບການຜະລິດສິນຄ້າ, ການຄ້າ, ການບໍລິການ ແລະ ອື່ນໆ ພາຍໃນບ້ານຂອງຕົນ ທີ່ຍັງບໍ່ທັນໄດ້ຂຶ້ນ ແລະ ຂຶ້ນທະບຽນວິສາຫະກິດແລ້ວ; ໄດ້ມີການເສຍພັນທະອາກອນໃຫ້ລັດຕາມກົດໝາຍ ແລະ ລະບຽບການ, ໄດ້ຢັ້ງຢືນການມີຕົວຕົນຂອງທຸລະກິດ ແລະ ອື່ນໆ ເພື່ອລາຍງານເປັນແຕ່ລະໄລຍະປະຈຳ ເດືອນ, ງວດ, ປີ ໃຫ້ກັບອົງການປົກຄອງ, ຫ້ອງການອຸດສາຫະກຳ ແລະ ການຄ້າ, ຫ້ອງການການເງິນ ເມືອງ-ນະຄອນ ຢ່າງເປັນປົກກະຕິ;

ຫ້ອງການອຸດສາຫະກຳ ແລະ ການຄ້າ, ຫ້ອງການການເງິນເມືອງ-ນະຄອນ ລົງສົມທົບກັບອົງການປົກຄອງບ້ານ ເກັບກຳສັງລວມສະຖິຕິ, ກວດກາ, ສະຫຼຸບ ແລະ ລາຍງານກ່ຽວກັບສະຖິຕິ, ຈຳນວນຜູ້ດຳເນີນ

ທຸລະກິດທີ່ຍັງບໍ່ທັນໄດ້ຂຶ້ນ ແລະ ຂຶ້ນທະບຽນວິສາຫະກິດແລ້ວ, ເພື່ອຍັ້ງຢືນການມີຕົວຕົນຂອງຫົວໜ່ວຍວິສາຫະກິດ ພ້ອມທັງຕິດຕາມ, ກວດກາ ເປັນແຕ່ລະໄລຍະຢ່າງເປັນປົກກະຕິ ໃນການປະຕິບັດພັນທະໃຫ້ລັດຕາມກົດໝາຍລະບຽບການ;

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ພະແນກການເງິນແຂວງ ລົງສົມທົບກັບເມືອງ-ນະຄອນ ເກັບກຳສັງລວມສະ ຕິຖິ, ກວດກາ, ປະເມີນຜົນ, ສະຫຼຸບ ແລະ ລາຍງານກ່ຽວກັບສະຖິຕິ, ຈຳນວນຜູ້ດຳເນີນທຸລະກິດ ທີ່ຍັງບໍ່ທັນໄດ້ຂຶ້ນທະບຽນວິສາຫະກິດ ແລະ ຂຶ້ນທະບຽນວິສາຫະກິດແລ້ວ, ໃຫ້ກັບອົງການປົກຄອງແຂວງ ແລະ ກະຊວງສາຍຕັ້ງຂອງຕົນ ເປັນແຕ່ລະໄລຍະ ປະຈຳເດືອນ, ງວດ, ປີ ເປັນປົກກະຕິ.

## ໝວດທີ 4
## ສິດ ແລະ ພັນທະຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

### ມາດຕາ 12 (ປັບປຸງ) ສິດຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ຫົວໜ່ວຍ ຈນກ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ດຳເນີນທຸລະກິດ ຈນກ ໃນທຸກຂົງເຂດ ໂດຍບໍ່ຂັດກັບກົດໝາຍ ແລະ ລະບຽບການ;

2. ມອບ-ໂອນ ປ່ຽນແທນ ແລະ ໃຫ້ການສືບທອດ ໃນການດຳເນີນທຸລະກິດ ຈນກ ຕາມກົດໝາຍ ແລະ ລະບຽບການ;

3. ນຳສະເໜີ ແລະ ປົກປ້ອງຜົນປະໂຫຍດຂອງຕົນຕໍ່ການຈັດຕັ້ງຂອງລັດ, ຖ້າຫາກເຫັນວ່າ ມີບາງລະບຽບການຂອງລັດ ທີ່ບໍ່ເອື້ອອຳນວຍ, ກົດໜ່ວງຖ່ວງດຶງ ຫຼື ກີດຂວາງ ໃນການດຳເນີນທຸລະກິດຂອງ ຈນກ.

### ມາດຕາ 13 (ປັບປຸງ) ພັນທະຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

1. ຈັດຕັ້ງຜັນຂະຫຍາຍ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ໃນແຕ່ລະໄລຍະໃຫ້ປາກົດຜົນເປັນຈິງ.

2. ເຄື່ອນໄຫວທຸລະກິດ ຕາມວັດຖຸປະສົງຂອງຕົນ, ຖືບັນຊີວິສາຫະກິດ, ປະຕິບັດພັນທະຕໍ່ລັດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ອອກແຮງງານ, ປົກປັກຮັກສາສິ່ງແວດລ້ອມ, ເຄົາລົບກົດໝາຍ, ລະບຽບອື່ນໆ ທີ່ກ່ຽວຂ້ອງຂອງ ສປປ ລາວ.

## ໝວດທີ 5
## ນະໂຍບາຍສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

### ມາດຕາ 14 (ປັບປຸງ) ນະໂຍບາຍສົ່ງເສີມ

1. ການສ້າງ ສະພາບແວດລ້ອມ ທີ່ເອື້ອອຳນວຍ;
2. ການເຂົ້າເຖິງ ແຫຼ່ງທຶນ;
3. ການຜ່ອນຜັນ ດ້ານພາສີ, ອາກອນ ແລະ ພັນທະຕ່າງໆ;
4. ການສ້າງຕັ້ງ ແລະ ພັດທະນາ ຜູ້ປະກອບກິດຈະການໃໝ່;
5. ການເຂົ້າເຖິງ ການບໍລິການ ໃຫ້ຄຳປຶກສາ ແລະ ຂໍ້ມູນຂ່າວສານ;
6. ການເພີ່ມຜະລິດຕະພາບ, ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳ;
7. ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;
8. ການປົກປ້ອງ ຄຸ້ມຄອງ ລາຄາສິນຄ້າ ແລະ ຄ່າບໍລິການ;
9. ນະໂຍບາຍອື່ນໆທີ່ແຂວງໄດ້ກຳນົດເປັນແຕ່ລະໄລຍະ.

**ມາດຕາ 15 (ປັບປຸງ) ການສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍ**

ອົງການປົກຄອງແຂວງ ອໍານວຍຄວາມສະດວກ ໃນການສ້າງ ຫຼື ປັບປຸງ ນິຕິກໍາໃຕ້ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ເພື່ອຫຼຸດຜ່ອນຂັ້ນຕອນ ໃນການອະນຸມັດ ຫຼື ລຶບລ້າງສິ່ງກີດຂວາງຕ່າງໆ;

ສະພາການຄ້າ ແລະ ອຸດສາຫະກໍາແຂວງ, ສູນບໍລິການ ຈນກ ແລະ ພາກສ່ວນທີ່ກ່ຽວຂ້ອງ, ສ້າງເງື່ອນໄຂ ແລະ ກົນໄກປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ເພື່ອແກ້ໄຂບັນຫາ ທີ່ເປັນການກີດໜ່ວງການພັດທະນາຂອງທຸລະກິດ, ຊ່ວຍເຫຼືອ ທາງດ້ານເຕັກນິກ ວິຊາການໃຫ້ແກ່ ຈນກ.

**ມາດຕາ 16 (ປັບປຸງ) ການເຂົ້າເຖິງ ແຫຼ່ງທຶນ**

ອົງການປົກຄອງແຂວງ, ຂະແໜງການກ່ຽວຂ້ອງ ເອົາໃຈໃສ່ ເກັບກໍາສັງລວມ ເອົາບັນດານະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ນິຕິກໍາ ລົງເຜີຍແຜ່ໃຫ້ບັນດາຜູ້ປະກອບກິດຈະການ ຈນກ ຮັບຮູ້ ແລະ ເຂົ້າໃຈໄດ້ໃນການເຂົ້າຫາແຫຼ່ງທຶນດອກເບ້ຍຕໍ່າຂອງລັດຖະບານທີ່ປ່ອຍກູ້ໃຫ້ ໂດຍການປ່ອຍກູ້ຜ່ານລະບົບທະນາຄານທຸລະກິດ, ສະຖາບັນການເງິນ ແລະ ກອງທຶນອື່ນໆ;

ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ສະພາການຄ້າ ແລະ ອຸດສາຫະກໍາ, ສູນບໍລິການ ຈນກ, ທະນາຄານຕ່າງໆ ປະສານສົມທົບກັນຢ່າງກົມກຽວ ໃນການຊ່ວຍເຫຼືອຊຸກຍູ້, ສົ່ງເສີມ ບັນດາຫົວໜ່ວຍ ຈນກ, ເພື່ອສ້າງຄວາມເຂັ້ມແຂງ ໃຫ້ເຂົາເຈົ້າເປັນຕົ້ນ ການຈັດຝຶກອົບຮົມບັນດາຫົວຂໍ້ຕ່າງໆ ທີ່ນອນໃນເງື່ອນໄຂຂອງລັດຖະບານ ຕໍ່ການເຂົ້າຫາແຫຼ່ງທຶນຂອງ ຈນກ;

ບັນດາຂະແໜງການ, ພະແນກການອ້ອມຂ້າງແຂວງ ທີ່ມີຫົວໜ່ວຍທຸລະກິດ ຈນກ ຂຶ້ນກັບການຄຸ້ມຄອງຂອງຕົນ, ເອົາໃຈໃສ່ຊ່ວຍເຫຼືອຄົ້ນຄວ້າ, ຊອກຫາທຶນສົມທົບທັງພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ຫົວໜ່ວຍ ຈນກ ໃນການນໍາໃຊ້ເຕັກໂນໂລຊີ, ນະວັດຕະກໍາໃໝ່ເຂົ້າໃສ່ການຜະລິດ, ການດໍາເນີນທຸລະກິດຂອງວິສາຫະກິດເຫຼົ່ານັ້ນ.

**ມາດຕາ 17 (ປັບປຸງ) ການຜ່ອນຜັນ ດ້ານພາສີ, ອາກອນ ແລະ ພັນທະຕ່າງໆ**

ອົງການປົກຄອງແຂວງ ຄົ້ນຄວ້ານະໂຍບາຍຜ່ອນຜັນ ພາສີ, ອາກອນ ເພື່ອນໍາສະເໜີ ສະພາປະຊາຊົນແຂວງຮັບຮອງ ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບຫຼັກການ, ເພື່ອຊຸກຍູ້ສົ່ງເສີມ ຈນກ ໂດຍສະເພາະແມ່ນຂະແໜງການທຸລະກິດ ທີ່ເປັນບູລິມະສິດຂອງແຂວງກໍານົດໄວ້ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ຕາມຄວາມເໝາະສົມ;

ສໍາລັບຈຸນລະວິສາຫະກິດກໍ່ຕັ້ງໃໝ່ ແລະ ຜູ້ປະກອບກິດຈະການໃໝ່ ທີ່ດໍາເນີນກິດຈະການ ຕາມຂະແໜງການໃນເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງ ບໍ່ເອື້ອອໍານວຍແກ່ການລົງທຶນ ທີ່ພາກລັດກໍານົດໄວ້ ຈະໄດ້ຮັບນະໂຍບາຍສົ່ງເສີມ ເຊັ່ນ: ຫົວໜ່ວຍ ຈຸນລະວິສາຫະກິດ ທີ່ມີລາຍຮັບປະຈໍາປີ ຕໍ່າກວ່າ 50.000.000 ກີບ/ປີ ລົງມາ ແມ່ນຈະໄດ້ຮັບການຍົກເວັ້ນ ການເສຍອາກອນ, ມີລາຍຮັບ ແຕ່ 50.000.001 ກີບ/ປີ ຫາ 400.000.000 ກີບ/ປີ ໃຫ້ເສຍອາກອນຕາມຮູບແບບ ຄື: ໃນອັດຕາ 1% (ໜຶ່ງສ່ວນຮ້ອຍ) ສໍາລັບການຜະລິດກະສິກໍາ, ອຸດສາຫະກໍາ ແລະ ການຜະລິດອື່ນໆ; ອັດຕາ 2% (ສອງສ່ວນຮ້ອຍ) ສໍາລັບການຄ້າ; ອັດຕາ 3% (ສາມສ່ວນຮ້ອຍ) ສໍາລັບການບໍລິການ (ອີງຕາມ ກົດໝາຍ ວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ໝວດທີ 2 ມາດຕາ 29 ຂໍ້ 1, 2).

**ມາດຕາ 18 (ປັບປຸງ) ການສ້າງຕັ້ງ ແລະ ພັດທະນາ ຜູ້ປະກອບກິດຈະການໃໝ່**

ສະພາການຄ້າ ແລະ ອຸດສາຫະກໍາແຂວງ, ສູນບໍລິການ ຈນກ, ຂະແໜງການທີ່ກ່ຽວຂ້ອງ,ໃຫ້ຄໍາປຶກສາ, ຈັດຝຶກອົບຮົມໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການໄດ້ຮັບຮູ້, ເຂົ້າໃຈ ແລະ ກໍາໄດ້ຫຼັກການ, ລະບຽບການ ໃນການດໍາເນີນທຸລະກິດ ການເລືອກຂະແໜງອາຊີບ;

ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ເກີດມີທຸລະກິດຮູບແບບໃໝ່, ທຸລະກິດທີ່ໄດ້ຮັບສິດ, ທຸລະກິດເພື່ອສັງຄົມ ແລະ ຮູບແບບອື່ນ ທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບກິດຈະການໃໝ່;

ສົ່ງເສີມ ແລະ ໃຫ້ການຊ່ວຍເຫຼືອ ຜູ້ປະກອບກິດຈະການໃນການພັດທະນາຕົນເອງ ດ້ວຍການຈັດຝຶກອົບຮົມ, ການເຂົ້າເຖິງແຫຼ່ງທຶນ, ການບໍລິຫານ ແລະ ສ້າງເງື່ອນໄຂ ໃຫ້ໄດ້ເຂົ້າຮ່ວມການຍົກລະດັບຄວາມຮູ້ທັງຢູ່ພາຍໃນ ແລະ ຕ່າງປະເທດ;

ສົ່ງເສີມການຈັດກິດຈະກໍາກ່ຽວກັບການສ້າງຜູ້ປະກອບກິດຈະການ ເຊັ່ນ ການແຂ່ງຂັນແຜນທຸລະກິດ, ການຈັບຄູ່ທຸລະກິດ ແລະ ການຍ້ອງຍໍຜູ້ປະກອບກິດຈະການດີເດັ່ນ.

**ມາດຕາ 19 (ປັບປຸງ) ການເຂົ້າເຖິງ ການບໍລິການ ໃຫ້ຄໍາປຶກສາ ແລະ ຂໍ້ມູນຂ່າວສານ**

ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ສົມທົບກັບ ສະພາການຄ້າ ແລະ ອຸດສາຫະກໍາແຂວງ ແລະ ສູນບໍລິການ ຈນກ ເພື່ອບໍລິການໃຫ້ແກ່ປະຊາຊົນ ຫຼື ຫົວໜ່ວຍ ຈນກ ສາມາດເຂົ້າເຖິງ ການບໍລິການໃຫ້ຄໍາປຶກສາ ຫຼື ສະໝັກຮ່ວມຊຸດຝຶກອົບຮົມຫົວຂໍ້ຕ່າງໆກ່ຽວກັບການສ້າງຕັ້ງວິສາຫະກິດ, ການບໍລິຫານ, ການດໍາເນີນທຸລະກິດ;

ສະຖາບັນການສຶກສາຕ່າງໆ ຈັດຫຼັກສູດການສອນ, ການຝຶກອົບຮົມ ສະໜອງບໍລິການດ້ານເຕັກນິກ, ວິຊາການໃຫ້ແກ່ ຈນກ ໃນຫົວຂໍ້ຕ່າງໆ ເຊັ່ນ: ການປູກຝັງ, ລ້ຽງສັດ, ການຜະລິດ, ການປຸງແຕ່ງ, ການບໍລິການ, ການຖ່າຍທອດເຕັກໂນໂລຊີຕ່າງໆ.

**ມາດຕາ 20 (ປັບປຸງ) ການເພີ່ມຜະລິດຕະພາບ, ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກໍາ**

ສະພາການຄ້າ ແລະ ອຸດສາຫະກໍາແຂວງ, ສູນບໍລິການ ຈນກ ແລະ ພະແນກການຕ່າງໆຂອງແຂວງ, ສໍານັກງານສົ່ງເສີມ ຈນກ ສົມທົບກັນຈັດຝຶກອົບຮົມຫົວຂໍ້ຕ່າງໆກ່ຽວກັບການຄຸ້ມຄອງຄຸນນະພາບ ໃຫ້ກັບບັນດາຜູ້ປະກອບການພາຍໃນແຂວງ ເພື່ອໃຫ້ຜະລິດຕະພັນມີຄຸນນະພາບ ແລະ ໄດ້ມາດຕະຖານສາມາດແຂ່ງຂັນໄດ້ທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ: ການເພີ່ມປະສິດທິພາບ ການຜະລິດຂອງໂຮງງານໃຫ້ສູງຂຶ້ນ (5S KAI ZEN), ການຜະລິດທີ່ດີ (GMP), ການຜະລິດກະສິກໍາທີ່ດີ (GAP), ມາດຕະຖານສາກົນ (ISO), ການວິເຄາະ ແລະ ຄວບຄຸມຈຸດວິກິດຄວາມປອດໄພການຜະລິດອາຫານ (HACCP), ມາດຖານການບໍລິການ ແລະ ທ່ອງທ່ຽວ.

**ມາດຕາ 21 (ປັບປຸງ) ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ**

ອີງການປົກຄອງແຂວງ, ພະແນກອຸດສາຫະກໍາ ແລະ ການຄ້າ ປະສານສົມທົບກັບ ສະພາການຄ້າ ແລະ ອຸດສາຫະກໍາແຂວງ, ພະແນກການຕ່າງໆຂອງແຂວງ ນໍາພາຫົວໜ່ວຍ ຈນກ ເພື່ອເຂົ້າເຖິງ ແລະ ຂະຫຍາຍຕະຫຼາດຈໍາໜ່າຍສິນຄ້າ ດ້ວຍການສ້າງ ຫຼື ສະໜອງຂໍ້ມູນ-ຂ່າວສານ, ການຈັດຝຶກອົບຮົມ ດ້ານການຕະຫຼາດ, ການຈັດງານວາງສະແດງສິນຄ້າ, ງານຕະຫຼາດນັດ, ການຈັດຄະນະຜູ້ແທນ ໄປທັດສະນະສຶກສາ, ແລກປ່ຽນບົດ ຮຽນດ້ານການຕະຫຼາດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມຄວາມເໝາະສົມ;

ເພີ່ມທະວີ ການອໍານວຍຄວາມສະດວກ ດ້ານການຄ້າ ການຈັດສົ່ງສິນຄ້າ, ການແຈ້ງພາສີ, ການຢັ້ງຢືນດ້ານເຕັກນິກຕ່າງໆ ເຊັ່ນ: ການຢັ້ງຢືນສຸຂະອານະໄມ ແລະ ອານາໄມພືດ-ສັດ, ມາດຕະຖານຄວາມປອດໄພຂອງອາຫານ ແລະ ສິນຄ້າ;

ສົ່ງເສີມການຮ່ວມເປັນກຸ່ມຂອງຂະແໜງທຸລະກິດ ປະເພດດຽວກັນ ແລະ ມີທີ່ຕັ້ງໃກ້ຄຽງກັນ ເພື່ອໃຫ້ສາ ມາດຮ່ວມມືກັນ ແລະ ແບ່ງງານກັນ ໃນການຜະລິດເພື່ອເຮັດໃຫ້ຕົ້ນທຶນຕໍ່າ ເພີ່ມອໍານາດຕໍ່ລອງດ້ານຕະຫຼາດ ແລະ ຜູ້ສະໜອງປັດໄຈການຜະລິດ;

ສົມທົບກັບ ສະພາການຄ້າ ແລະ ອຸດສາຫະກໍາແຂວງ ປະສານກັບສໍານັກງານກອງທຶນສົ່ງເສີມ ຈນກ ເພື່ອສະໜອງທຶນສົມທົບ 50% ເພື່ອເປັນຄ່າໃຊ້ຈ່າຍ ດ້ານການຕະຫຼາດ ເຊັ່ນ ການໄປຮ່ວມງານວາງສະແດງສິນຄ້າ, ງານພົບປະນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບກອງທຶນ.

**ມາດຕາ 22 (ປັບປຸງ) ການປົກປ້ອງຄຸ້ມຄອງ ລາຄາສິນຄ້າ ແລະ ຄ່າບໍລິການ**

ຄະນະກໍາມະການຄຸ້ມຄອງລາຄາສິນຄ້າ ແລະ ການບໍລິການຂັ້ນແຂວງ ໃຫ້ການປົກປ້ອງລາຄາສິນຄ້າ ເປັນບູລິມະສິດຂອງແຂວງ ດ້ວຍການສ້າງນິຕິກໍາຄຸ້ມຄອງ ການນໍາເຂົ້າສິນຄ້າ ຕາມຊາຍແດນຕິດຈອດກັບຕ່າງປະເທດ; ຄວບຄຸມດຸ່ນດ່ຽງການນໍາເຂົ້າ, ປະຕິບັດມາດຕະການປົກປ້ອງຜູ້ປະກອບການພາຍໃນ; ກໍານົດລາຄາຂາຍສົ່ງ ຄ້າປະເພດສິນຄ້າຄວບຄຸມລາຄາທີ່ຜະລິດພາຍໃນໄດ້ພຽງພໍ ແລະ ຈໍາກັດສິນຄ້າທີ່ນໍາເຂົ້າໃຫ້ຢູ່ໃນກໍານົດ, ເພື່ອເຮັດໃຫ້ຫົວໜ່ວຍ ຈນກ ສາມາດແຂ່ງຂັນ ແລະ ຕອບສະໜອງ ຕໍ່ຄວາມຕ້ອງການຂອງຕະຫຼາດພາຍໃນ. ຮັບປະ ກັນການໄດ້ປຽບ ຫຼື ເສຍປຽບທາງທຸລະກິດ, ແຂ່ງຂັນຢ່າງຍຸຕິທໍາ, ປົກປ້ອງຜູ້ບໍລິໂພກ ແລະ ຜູ້ຊົມໃຊ້ສິນຄ້າຢ່າງ ເໝາະສົມ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 23 (ປັບປຸງ) ຂໍ້ຫ້າມ ທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ກີດໜ່ວງ, ຖ່ວງດຶງ ຫຼື ຂັດຂວາງ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ຂໍອະນຸມັດລົງທຶນເພື່ອດໍາເນີນ ຫົວໜ່ວຍຈນກ;
2. ເປີດເຜີຍ ຄວາມລັບ ຫຼື ຂໍ້ມູນ ອັນເປັນການສ້າງຄວາມເສຍຫາຍ ໃຫ້ແກ່ຫົວໜ່ວຍ ຈນກ ໃດໜຶ່ງ;
3. ໃສ່ຮ້າຍ, ປ້າຍສີ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ເພື່ອທັບຖົມ ແລະ ທໍາລາຍຫົວໜ່ວຍ ຈນກ ໃດໜຶ່ງເພື່ອຜົນປະໂຫຍດສ່ວນຕົວ, ກົມກອງ, ກຸ່ມກ້ອນ ຫຼື ບຸກຄົນ ໂດຍເຈດຕະນາ;
4. ເມີນເສີຍ ຫຼື ມີພຶດຕິກໍາອື່ນທີ່ລະເມີດຕໍ່ ກົດໝາຍ, ລະບຽບການ, ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 24 (ປັບປຸງ) ຂໍ້ຫ້າມສໍາລັບ ເຈົ້າໜ້າທີ່ພະນັກງານລັດ**

ຫ້າມການຈັດຕັ້ງ ແລະ ພະນັກງານສົ່ງເສີມ ຈນກ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕໍາແໜ່ງ ເພື່ອຮຽກຮັບສິນບົນ ຈາກຫົວໜ່ວຍ ຈນກ;
2. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບ ການສົ່ງເສີມ ການຄຸ້ມຄອງ, ຕິດຕາມ, ກວດກາ ຫົວໜ່ວຍ ຈນກ ທີ່ການຈັດຕັ້ງມອບໝາຍໃຫ້;
3. ສວຍໃຊ້ໜ້າທີ່, ຕໍາແໜ່ງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ກຸ່ມຄົນໃດໜຶ່ງ;
4. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບ.

**ມາດຕາ 25 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ດໍາເນີນ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຫ້າມ ຈນກ ແລະ ຜູ້ປະກອບກິດຈະການ ມີພຶດຕິກໍາ ດັ່ງນີ້:

1. ປອມແປງ ເອກະສານ, ຊຸກເຊື່ອງ ຫຼື ລາຍງານຂໍ້ມູນ ທີ່ບໍ່ຖືກຕ້ອງ ເພື່ອຫຼົບຫຼີກ ການເສຍພາສີ, ອາກອນ ແລະ ພັນທະອື່ນໆ;
2. ກີດຂວາງ, ສ້າງຄວາມຫຍຸ້ງຍາກ ໃຫ້ເຈົ້າໜ້າທີ່ພະນັກງານ ແລະ ການຈັດຕັ້ງ ທີ່ໄດ້ຮັບການມອບໝາຍໃນການສົ່ງເສີມ, ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ ວຽກງານ ຈນກ;
3. ໃຫ້ສິນບົນ ຫຼື ຊັບສິ່ງຂອງ ແກ່ການຈັດຕັ້ງ, ເຈົ້າໜ້າທີ່ພະນັກງານສົ່ງເສີມ, ພະນັກງານຄຸ້ມຄອງທຸກຂະແໜງການເພື່ອປົກປ້ອງຜົນປະໂຫຍດ ທີ່ບໍ່ຊອບທໍາຂອງຕົນ;
4. ປອມແປງ, ບິດເບືອນ, ລາຍງານຂໍ້ມູນທີ່ບໍ່ຖືກຕ້ອງ ທີ່ບໍ່ຄົບມາດຖານ ເງື່ອນໄຂຂອງບຸກຄົນ, ນິຕິບຸກຄົນ ໃນການຂໍສ້າງຕັ້ງ ຈນກ ທີ່ກົດໝາຍ ແລະ ລະບຽບການໄດ້ກໍານົດໄວ້;
5. ຫ້າມທຸກການກະທໍາຂອງບັນດາຫົວໜ່ວຍ ຈນກ ທີ່ຂັດ ແລະ ລະເມີດຕໍ່ ກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 26 ຮູບການແກ້ໄຂຂໍ້ຂັດແຍ່ງ**

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂ ທາງດ້ານບໍລິຫານ ຂອງຂະແໜງການທີ່ກ່ຽວຂ້ອງ;
3. ການແກ້ໄຂ ໂດຍຄະນະກຳມະການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂຕາມຄຳຮ້ອງຂໍຄວາມເປັນທຳ.

**ມາດຕາ 27 (ປັບປຸງ) ການໄກ່ເກ່ຍ ຫຼື ການປະນີປະນອມ**

ກໍລະນີ ເກີດຂໍ້ຂັດແຍ່ງ ລະຫວ່າງຫົວໜ່ວຍ ຈມກ ດ້ວຍກັນ ແມ່ນໃຫ້ທັງສອງຝ່າຍ ຄູ່ກໍລະນີໄດ້ປຶກສາຫາລືໄກ່ເກ່ຍເຊິ່ງກັນ ແລະ ກັນກ່ອນ, ໂດຍແຈ້ງໃຫ້ພາກສ່ວນກ່ຽວຂ້ອງໃດໜຶ່ງ ເຂົ້າຮ່ວມເປັນພະຍານ ເຊັ່ນ: ອົງ ການປົກຄອງບ້ານ, ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ຫ້ອງການພາກລັດໃດໜຶ່ງທີ່ກ່ຽວຂ້ອງເປັນສັກຂີພະຍານລົງລາຍເຊັນໃນນາມພະຍານໄວ້ເປັນຫຼັກຖານ.

**ມາດຕາ 28 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ ຂອງອົງການທີ່ກ່ຽວຂ້ອງ**

ກໍລະນີ ມີການກະທຳຜິດ ຕໍ່ກົດໝາຍ, ດຳລັດ ຫຼື ຄຳສັ່ງ, ລະບຽບໃດໜຶ່ງ ຂອງຫົວໜ່ວຍ ຈມກ ຈະໄດ້ຮັບການກວດກາ, ກວດສອບ ແກ້ໄຂດ້ວຍມາດຕະການ ທາງດ້ານບໍລິຫານ ອີງຕາມກໍລະນີໜັກ ຫຼື ເບົາ ເຊັ່ນ: ການກ່າວເຕືອນ, ການປັບໄໝ, ການຍຸບເລີກເອກະສານ (ຖອນເອກະ ສານ) ແລະ ອື່ນໆ ໂດຍແມ່ນຄະນະກຳມະ ການຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຕາມລະບຽບການສະເພາະໃຜລາວ;

ກໍລະນີ ເປັນການກະທຳຜິດຂອງພະນັກງານ ຜູ້ຮັບຜິດຊອບ ວຽກງານສົ່ງເສີມ, ຄຸ້ມຄອງ ຈມກ ຂອງອົງການຄຸ້ມຄອງຂັ້ນໃດໜຶ່ງ ແມ່ນມອບໃຫ້ການຈັດຕັ້ງຂອງອົງການຈັດຕັ້ງນັ້ນ ເປັນຜູ້ແກ້ໄຂທາງບໍລິຫານຕາມກົດໝາຍພະນັກງານ-ລັດຖະກອນ.

**ມາດຕາ 29 ການແກ້ໄຂ ໂດຍຄະນະກຳມະການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ກໍລະນີ ເກີດຂໍ້ຂັດແຍ່ງ ທີ່ເປັນລັກສະນະແກ້ໄຂຍາກ ຫຼື ມີຜົນກະທົບຕໍ່ຜົນປະໂຫຍດຂອງຊາດ, ປະຊາຊົນ ໂດຍສ່ວນລວມ ແມ່ນມອບໃຫ້ຄະນະແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດຂັ້ນແຂວງ ເປັນຜູ້ຄົ້ນຄວ້າແກ້ໄຂຕາມແຕ່ລະກໍລະນີ.

**ມາດຕາ 30 ການຕັດສິນຂອງສານ**

ກໍລະນີ ເກີດຂໍ້ຂັດແຍ່ງ ທີ່ເປັນລັກສະນະແກ້ໄຂຍາກ ບໍ່ສາມາດແກ້ໄຂທາງດ້ານອື່ນໆໄດ້ ແມ່ນມອບໃຫ້ພາກສ່ວນກ່ຽວຂ້ອງ ດຳເນີນຄະດີຕາມຂະບວນການຍຸຕິທຳ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

**ມາດຕາ 31 ການແກ້ໄຂຕາມຄຳຮ້ອງຂໍຄວາມເປັນທຳ**

ການແກ້ໄຂຕາມຄຳຮ້ອງຂໍຄວາມເປັນທຳ ຕາມກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງ ປີ 2022 ແມ່ນຄຳຮ້ອງທີ່ຍື່ນຕໍ່ຄະນະປະຈຳສະພາປະຊາຊົນແຂວງ ເພື່ອໃຫ້ກວດກາ ແລະ ພິຈາລະນາກ່ຽວກັບ ການຕົກລົງຂອງອົງການປົກຄອງທ້ອງຖິ່ນ, ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນທີ່ເຫັນວ່າ ການແກ້ໄຂນັ້ນເປັນການລະເມີດກົດໝາຍ ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

## ໝວດທີ 8
## ອົງການ ຄຸ້ມຄອງ
## ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 32 (ປັບປຸງ) ອົງການຄຸ້ມຄອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ອົງການຄຸ້ມຄອງ ຈນກ ພາຍໃນແຂວງ ແມ່ນອົງການປົກຄອງແຂວງເປັນຜູ້ຄຸ້ມຄອງ ຢ່າງລວມສູນໃນຂອບເຂດທົ່ວແຂວງ ໂດຍມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ, ປະສານສົມທົບກັບຂະແໜງການກ່ຽວຂ້ອງ ມີຄື:

1. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າແຂວງ;
2. ຂັ້ນເມືອງ/ນະຄອນ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ນະຄອນ;
3. ຂັ້ນບ້ານ ແມ່ນ ອົງການປົກຄອງບ້ານ.

**ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກາ ແລະ ການຄ້າແຂວງ**

ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ເຜີຍແຜ່ນະໂຍບາຍ ແລະ ແຜນຍຸດທະສາດ, ໂດຍສະເພາະແມ່ນ ຂໍ້ຕົກລົງສະບັບນີ້ໃຫ້ ບຸກຄົນ ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມ ໄດ້ເຂົ້າໃຈໃນການດຳເນີນທຸລະກິດ ຈນກ ຢ່າງກວ້າງຂວາງ ແລະ ເປັນປົກກະຕິ;
2. ນຳພາ-ຊີ້ນຳ ສະພາການຄ້າ ແລະ ອຸດສາຫະກຳແຂວງ, ສູນບໍລິການ ຈນກ ແຂວງ ຈັດຝຶກອົບຮົມກ່ຽວກັບການສ້າງຕັ້ງວິສາຫະກິດ, ເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ຄວາມຮູ້, ບົດຮຽນ ແລະ ປະສົບປະການຕ່າງໆ ໃຫ້ຜູ້ທີ່ສົນໃຈ ແລະ ຜູ້ປະກອບການ ຈນກ ເປັນປົກກະຕິ;
3. ສະໜອງ ຂໍ້ມູນ-ຂ່າວສານ, ໃຫ້ຄຳປຶກສາ, ຈັດສົ່ງວິຊາການລົງຊີ້ນຳ ແລະ ນຳພາຈັດຕັ້ງປະຕິບັດໂດຍກົງ ຕາມການສະເໜີຂອງຜູ້ປະກອບການ;
4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບ ລາຍງານ ສະຖິຕິ, ຜົນການຈັດຕັ້ງປະຕິບັດວຽກງານສົ່ງເສີມ, ຄຸ້ມຄອງ ຈນກ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
5. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ກັບການສະເໜີ ໃນການລົງທຶນ ດຳເນີນ ຈນກ ພາຍໃນແຂວງ;
6. ສະເໜີ ບຳລຸງກໍ່ສ້າງ ຍົກລະດັບຄວາມຮູ້, ຄວາມສາມາດ, ວິຊາການກ່ຽວກັບ ການຄຸ້ມຄອງການສົ່ງ ເສີມ ຈນກ ໃຫ້ບຸກຄະລາກອນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;
7. ຄົ້ນຄວ້າ ແລະ ມີຄຳເຫັນ ເພື່ອແກ້ໄຂຂໍ້ຂັດແຍ່ງ ດ້ານບໍລິຫານ ທີ່ເກີດຂຶ້ນຈາກການດຳເນີນ ຈນກ ພາຍໃນແຂວງ;
8. ປຸກລະດົມ, ຂົນຂວາຍ, ຍາດແຍ່ງທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊຸກຍູ້ວຽກງານສົ່ງ ເສີມ, ຄຸ້ມຄອງ, ຈນກ ໃຫ້ມີການພັດທະນາ ແລະ ເຂັ້ມແຂງ ຂຶ້ນເທື່ອລະກ້າວ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງການຈັດຕັ້ງ.

**ມາດຕາ 34 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ/ນະຄອນ**

ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ/ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ນະໂຍບາຍ ແລະ ຈັດຕັ້ງປະຕິບັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ໂດຍສະເພາະແມ່ນ ຂໍ້ຕົກລົງສະບັບນີ້ ໃຫ້ແກ່ປະຊາຊົນ, ບຸກຄົນ, ນິຕິບຸກຄົນທີ່ມີຈຸດປະສົງໃນການລົງທຶນ ດຳເນີນທຸລະກິດ ຈນກ ພາຍໃນເມືອງ/ນະຄອນຂອງຕົນ;
2. ຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ, ສະຫຼຸບ, ລາຍງານ ການດຳເນີນທຸລະກິດ ຈນກ ພາຍໃນເມືອງ/ນະຄອນ ຂອງຕົນໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
3. ສະເໜີ ບຳລຸງກໍ່ສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ ບຸກຄະລາກອນພາຍໃນເມືອງ/ນະຄອນຂອງຕົນ;

4. ເຂົ້າຮ່ວມ ຊຸດຝຶກອົບຮົມກ່ຽວກັບວຽກງານ ສົ່ງເສີມ, ຄຸ້ມຄອງ ຈນກ ຕາມການເຊີນ ຂອງພະແນກ ແລະ ຂະແໜງການກ່ຽວຂ້ອງ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງການຈັດຕັ້ງ.

**ມາດຕາ 35 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ_ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ, ຂໍ້ມູນ-ຂ່າວສານ ແລະ ລະບຽບການ ກ່ຽວກັບການສົ່ງເສີມ, ຄຸ້ມຄອງ ຈນກ ໃຫ້ແກ່ປະຊາຊົນ, ຜູ້ປະກອບການ ເພື່ອຊຸກຍູ້ໃຫ້ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດຕົວຈິງ;

2. ຕິດຕາມ, ກວດກາ ຊຸກຍູ້ ແລະ ລາຍງານ ສະພາບການເຄື່ອນໄຫວ ຂອງຫົວໜ່ວຍ ຈນກ ທີ່ຕັ້ງຢູ່ໃນບ້ານຂອງຕົນ ເພື່ອລາຍງານໃຫ້ ເມືອງ/ນະຄອນ ເປັນປົກກະຕິ;

3. ແນະນຳ ປຸກລະດົມ ປະຊາຊົນ ແລະ ຜູ້ປະກອບການທີ່ດຳເນີນທຸລະກິດ ໃນລະດັບ ຈນກ ທີ່ບໍ່ທັນແຈ້ງຂຶ້ນທະບຽນ ໃຫ້ປະກອບເອກະສານ ສະເໜີຂະແໜງອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ/ນະຄອນ ຫຼື ແຂວງ ເພື່ອຂໍແຈ້ງຂຶ້ນທະບຽນ ໃຫ້ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ.

**ມາດຕາ 36 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ**

ຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ມີສິດ ແລະ ໜ້າທີ່ໃນການສົ່ງເສີມ, ຊຸກຍູ້, ຕິດຕາມ, ກວດກາ, ໃຫ້ການຮ່ວມມື ແລະ ປະສານສົມທົບກັບອົງການຄຸ້ມຄອງວຽກງານສົ່ງເສີມ ຈນກ ແລະ ການຈັດຕັ້ງສົ່ງເສີມ ຈນກ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 9
## ອົງການກວດກາ
## ວຽກງານສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 37 (ປັບປຸງ) ອົງການກວດກາ**

ອົງການກວດກາພາຍໃນ ແມ່ນ ອົງການຄຸ້ມຄອງ ທີ່ກຳນົດໄວ້ໃນມາດຕາ 31 ຂອງ ໝວດທີ 8 ໃນຂໍ້ຕົກລົງສະບັບນີ້;

ມີໜ້າທີ່ຈັດຕັ້ງປະຕິບັດ ໂຄງການສົ່ງເສີມ ຈນກ ທັງເຮັດໜ້າທີ່ໃນການຄຸ້ມຄອງ ເກັບກຳຂໍ້ມູນ, ກວດກາ, ຕິດຕາມ ແລະ ປະເມີນຜົນໂຄງການເປັນປະຈຳ ແລະ ຕໍ່ເນື່ອງປົກກະຕິ ຕາມຂັ້ນຂອງຕົນຮັບຜິດຊອບ;

ອົງການກວດກາພາຍນອກແມ່ນປະກອບມີ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການກວດສອບປະຈຳພາກກາງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ແຕ່ລະພາກສ່ວນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບ.

**ມາດຕາ 38 (ປັບປຸງ) ເນື້ອໃນກວດກາ**

ການກວດກາວຽກງານສົ່ງເສີມ ຈນກ ມີດັ່ງນີ້:

1. ກວດກາ ການດຳເນີນກິດຈະການ ຕາມຂະແໜງວິຊາຊີບ ຂອງບັນດາຫົວໜ່ວຍ ຈນກ ເພື່ອສົ່ງເສີມ ແລະ ຄຸ້ມຄອງ;

2. ກວດກາ ການຈັດຕັ້ງປະຕິບັດ ສິດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພາກສ່ວນກ່ຽວຂ້ອງທີ່ໄດ້ກຳນົດໄວ້ໃນຂໍ້ຕົກ ລົງສະບັບນີ້ ແລະ ກົດໝາຍລະບຽບການອື່ນທີ່ກ່ຽວຂ້ອງ;

3. ກວດກາ ຕາມການສະເໜີການຮ້ອງຂໍຂອງປະຊາຊົນ ແລະ ການຈັດຕັ້ງ ຕໍ່ພຶດຕິກຳ ການປະຕິບັດວຽກງານຂອງລັດຖະກອນ, ເຈົ້າໜ້າທີ່ສົ່ງເສີມ ແລະ ຄຸ້ມຄອງ ຈນກ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 39 ຮູບການກວດກາ**

1. ການກວດກາຕາມແຜນປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາເມື່ອເຫັນວ່າມີຄວາມຈຳເປັນ ແຕ່ການລົງກວດການັ້ນ ດຳເນີນຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 10
## ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການ ຕໍ່ຜູ້ທີ່ລະເມີດ

**ມາດຕາ 40 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຄື່ອນໄຫວການຈັດຕັ້ງປະຕິບັດວຽກງານສົ່ງເສີມ ຈນກ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ຫຼື ນະໂຍບາຍຕອບແທນອື່ນໆຈາກການຈັດຕັ້ງຂັ້ນເທິງ ຕາມຄວາມເໝາະສົມ.

**ມາດຕາ 41 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ທີ່ລະເມີດບັນດາຂໍ້ຫ້າມ, ເມີນເສີຍ ຕໍ່ການປະຕິບັດສິດ ແລະ ໜ້າທີ່ຂອງຕົນ ເປັນການສ້າງຄວາມຫຍຸ້ງຍາກ, ສ້າງຄວາມເສຍຫາຍໃຫ້ ຈນກ ກໍ່ຄືການຈັດຕັ້ງທີ່ກ່ຽວຂ້ອງຈະຖືກສຶກສາອົບຮົມ, ໃຊ້ມາດຕະການທາງວິໄນ, ກ່າວເຕືອນ, ຕິຕຽນຄວາມຜິດ ແລະ ກ້າວໄປເຖິງໃຊ້ມາດຕະການຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 42 (ປັບປຸງ) ການຈັດຕັ້ງປະຕິບັດ**

ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ, ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ເມືອງ, ນະຄອນ, ອົງການປົກຄອງບ້ານ, ບຸກຄົນ, ນິຕິບຸກຄົນ ທີ່ມີໜ້າທີ່ໃນການສົ່ງເສີມ ແລະ ຄຸ້ມຄອງ ການດຳເນີນທຸລະກິດ ຫົວໜ່ວຍ ຈນກ ຢູ່ແຂວງສະຫວັນນະເຂດ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 43 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ;

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການສົ່ງເສີມ, ຄຸ້ມຄອງວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 2043/ຈຂ.ສຂ, ລົງວັນທີ 16 ພະຈິກ 2020.

**ເຈົ້າແຂວງ**

ແຂວງສະຫວັນນະເຂດ
ເຈົ້າແຂວງ

ບຸນໂຈມ ອຸບົນປະເສີດ